ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 58 /ສພຂ.ຊຍ
ໄຊຍະບູລີ, ວັນທີ 28 ສິງຫາ 2023

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ
## ວ່າດ້ວຍການຮັບຮອງເອົາ ບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ກາງສະໄໝ ຂອງແຜນການ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝ

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ປີ2015 ມາດຕາ 77 ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ໃນວັນທີ 23 ສິງຫາ 2023 ກ່ຽວກັບການຈັດຕັ້ງ ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ກາງສະໄໝ ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ກາງສະໄໝ ແລະ ທິດທາງແຜນການທ້າຍສະໄໝ ຮອດປີ 2025. ໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາປະຊາຊົນແຂວງ ຊຸດທີ II.

ກອງປະຊຸມຕົກລົງ:

**ມາດຕາ 1** ຮັບຮອງເອົາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ກາງສະໄໝ ຂອງແຜນການ 5 ປີ (2021-2025)

ກອງປະຊຸມຍ້ອງຍໍຊົມເຊີຍ ແລະ ເຫັນດີ ເປັນເອກະພາບຕໍ່ການລາຍງານ ຂອງອົງການປົກຄອງແຂວງ ຊຶ່ງໄດ້ຍົກໃຫ້ເຫັນຄວາມພະຍາຍາມຂອງອົງການປົກຄອງແຂວງ ໃນການສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ກາງສະໄໝ ຂອງແຜນການ 5 ປີ. ໃນທາມກາງທີ່ສະພາບການພາກພື້ນ ແລະ ສາກົນທີ່ມີການຜັນແປຢ່າງສັບສົນ, ມີສິ່ງທ້າທາຍຫຼາຍຢ່າງ ເປັນຕົ້ນ ການແຜ່ລະບາດຂອງພະຍາດໂຄວິດ-19, ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງປະເທດເຮົາ ໄດ້ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ. ແຕ່ອົງການປົກຄອງແຂວງກໍ່ສາມາດຈັດຕັ້ງປະຕິບັດຄາດໝາຍທີ່ວາງໄວ້ຈຳນວນໜຶ່ງໄດ້ເກີນແຜນ ແລະ ຫຼາຍຄາດໝາຍມີຄວາມຄືບໜ້າ ເຮັດໃຫ້ ແຂວງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບເປັນລະບຽບຮຽບຮ້ອຍໂດຍພື້ນຖານ. ເສດຖະກິດມະຫາພາກສືບຕໍ່ເຕີບໂຕຢ່າງຕໍ່ເນື່ອງ ສະເລ່ຍ 4,5%; ລວມຍອດຜະລິດຕະພັນພາຍໃນແຂວງ (GDP) ປະຕິບັດໄດ້ 12.339 ຕື້ກີບ; ສະເລ່ຍຕໍ່ຫົວຄົນ 1.734 ໂດລາ; ສາມາດລະດົມທຶນເພື່ອການພັດທະນາ ບັນລຸໄດ້ 83,9% ຂອງແຜນ 5 ປີ ເທົ່າກັບ 2.903,14 ຕື້ກີບ ກວມເອົາ 23,5% ຂອງ GDP; ການຈັດເກັບລາຍຮັບງົບປະມານບັນລຸໄດ້ 61,77% ເທົ່າກັບ 3.198,90 ຕື້ກີບ; ການ

ຄຸ້ມຄອງລາຍຈ່າຍບັນລຸໄດ້ 44,57% ເທົ່າກັບ 1.352,21 ຕື້ກີບ; ມູນຄ່າສິນຄ້າສົ່ງອອກໄປຕ່າງປະເທດ ບັນລຸໄດ້ 85% ເທົ່າກັບ 186,2 ລ້ານໂດລາ; ມູນຄ່າສິນຄ້ານຳເຂົ້າຈາກຕ່າງປະເທດ ບັນລຸໄດ້ 69% ເທົ່າກັບ 166 ລ້ານໂດລາ ແລະ ການຄຸ້ມຄອງ ບໍລິຫານລັດ-ສັງຄົມດ້ວຍກົດໝາຍ ໄດ້ຮັບການປັບປຸງໃຫ້ດີຂຶ້ນ.

**ມາດຕາ 2 ຮັບຮອງເອົາທິດທາງ ແຜນການພັດທະນາເສດຖະກິດ-ສັງຄົມຂອງແຂວງ ທ້າຍສະໄໝ ຮອດປີ 2025**

ກອງປະຊຸມເຫັນດີເປັນເອກະພາບ ຮັບຮອງເອົາ 5 ທິດທາງລວມ, 6 ເປົ້າໝາຍ, 15 ແຜນວຽກຈຸດສຸມ ແລະ ຄາດໝາຍສູ້ຊົນຂອງບັນດາຂະແໜງການທີ່ວາງໄວ້ ໃນແຕ່ລະດ້ານດັ່ງນີ້:

**I. ຄາດໝາຍເສດຖະກິດມະຫາພາກ.**

1. **ການຂະຫຍາຍຕົວຂອງເສດຖະກິດ:** ສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວສະເລ່ຍບໍ່ໃຫ້ຫຼຸດ 5% ຕໍ່ປີ, ລວມຍອດຜະລິດຕະພັນພາຍໃນ ຮອດປີ 2025 ໃຫ້ໄດ້ 16.544 ຕື້ກີບ, ສະເລ່ຍໃສ່ຫົວຄົນໜຶ່ງໃຫ້ໄດ້ 2.278 ໂດລາສະຫະລັດ; ພ້ອມທັງຫັນໂຄງປະກອບເສດຖະກິດໄປຕາມທິດອຸດສາຫະກຳ ແລະ ທັນສະໄໝ ໃນນີ້:
   - ຂະແໜງກະສິກຳ ໃຫ້ເພີ່ມຂຶ້ນ 2,6% ກວມເອົາ 26%;
   - ຂະແໜງອຸດສາຫະກຳ ໃຫ້ເພີ່ມຂຶ້ນ 10,2% ກວມເອົາ 38%;
   - ຂະແໜງບໍລິການ ໃຫ້ເພີ່ມຂຶ້ນ 6,4% ກວມເອົາ 36% ຂອງລວມຍອດຜະລິດຕະພັນພາຍໃນ.
2. **ດ້ານງົບປະມານ:** ສູ້ຊົນເກັບລາຍຮັບເຂົ້າງົບປະມານໃຫ້ໄດ້ 3.640,94 ຕື້ກີບ, ໃນນີ້: ລາຍຮັບພູດສູມການປະຕິບັດຢູ່ແຂວງ ໃຫ້ໄດ້ 2.483,49 ຕື້ກີບ; ລາຍຮັບພາຍໃນແຂວງ ໃຫ້ໄດ້ 1.157,45 ຕື້ກີບ, ຄຸ້ມຄອງລາຍຈ່າຍໃຫ້ຢູ່ລະດັບ 1.351,50 ຕື້ກີບ;
3. **ດ້ານແຫຼ່ງທຶນເພື່ອການພັດທະນາ:** ສູ້ຊົນລະດົມທຶນເພື່ອການພັດທະນາທ້າຍສະໄໝ ໃຫ້ໄດ້ 23% ຂອງ ລວມຍອດຜະລິດຕະພັນພາຍໃນແຕ່ລະປີ. ໃນນີ້:
   - ການລົງທຶນຈາກງົບປະມານພາຍໃນ ກວມເອົາ 7%;
   - ການຊ່ວຍເຫຼືອລ້າທາງການເພື່ອການພັດທະນາ (ODA) ກວມເອົາ 15%;
   - ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ກວມເອົາ 55%;
   - ສິນເຊື່ອຂອງທະນາຄານ ແລະ ແຫຼ່ງທຶນອື່ນໆ ກວມເອົາ 23% ຂອງການລົງທຶນທັງໝົດ.

**II. ຄາດໝາຍເສດຖະກິດຂອງບັນດາຂະແໜງການ.**

1. **ກະສິກຳ ແລະ ປ່າໄມ້**
   - ຜະລິດເຂົ້າໃຫ້ໄດ້ 188.000 ໂຕນ/ປີ, ໃນນີ້: ເຂົ້ານາປີ 158.300 ໂຕນ, ເຂົ້ານາແຊງ 7.500 ໂຕນ, ເຂົ້າໄຮ່ 22.200 ໂຕນ, ຜະລິດເຂົ້າເປັນສິນຄ້າໃຫ້ໄດ້ປະມານ 70.000 ໂຕນ. ໃນນັ້ນ: ເຂົ້າຈ້າວ ໃຫ້ກວມເອົາ 30%;
   - ຜົນຜະລິດພືດເປັນສິນຄ້າ ບໍ່ໃຫ້ຫຼຸດ 2.000.000 ໂຕນ/ປີ;
   - ຜົນຜະລິດພືດສະບຽງອາຫານໃຫ້ໄດ້ 150.000 ໂຕນ/ປີຂຶ້ນໄປ;
   - ຜະລິດຊີ້ນ, ປາ ແລະ ໄຂ່ໃຫ້ໄດ້ 24.000 ໂຕນ/ປີ;
   - ຝູງສັດໃຫຍ່ຂະຫຍາຍຕົວສະເລ່ຍ 10% ຕໍ່ປີ; ໃນນີ້, ງົວຂະຫຍາຍຕົວ 12%, ຄວາຍຂະຫຍາຍຕົວ 8%.

2. **ອຸດສາຫະກຳ ແລະ ການຄ້າ**
   - ສູ້ຊົນເຮັດໃຫ້ມູນຄ່າການສົ່ງອອກສິນຄ້າ ໃຫ້ບັນລຸ 199,2 ລ້ານໂດລາ (ເພີ່ມຂຶ້ນ 7% ຕໍ່ປີ);

- ຄຸ້ມຄອງການນໍາເຂົ້າສິນຄ້າ ໃຫ້ບັນລຸ 178 ລ້ານໂດລາ (ເພີ່ມຂຶ້ນ 6-8% ຕໍ່ປີ);
- ສູ້ຊົນເຮັດໃຫ້ການຜະລິດດ້ານອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ ຂະຫຍາຍຕົວເພີ່ມຂຶ້ນສະເລ່ຍ 10-13% ຕໍ່ປີ;
- ສ້າງລວມຍອດມູນຄ່າການຜະລິດດ້ານອຸດສາຫະກໍາ ແລະ ຫັດຖະກໍາ ໃຫ້ໄດ້ 759,16 ຕື້ກີບ ແລະ ມູນຄ່າຈໍາໜ່າຍຜະລິດດ້ານອຸດສາຫະກໍາ ແລະ ຫັດຖະກໍາ ໃຫ້ໄດ້ 844,30 ຕື້ກີບ;

3. ພະລັງງານ ແລະ ບໍ່ແຮ່
   - ສູ້ຊົນໃຫ້ທຸກບ້ານທົ່ວແຂວງໄດ້ໃຊ້ໄຟຟ້າໃນລະບົບ 100% ແລະ ຄອບຄົວໃຊ້ໄຟຟ້າໃນລະບົບຫຼາຍກວ່າ 99% ໃນປີ 2025;
   - ຊຸກຍູ້ການພັດທະນາແຫຼ່ງຜະລິດໄຟຟ້າ ໃຫ້ໄດ້ 1 ໂຄງການ ແລະ ດໍາເນີນການຜະລິດ 1 ໂຄງການ ກໍາລັງຕິດຕັ້ງ 55 MW;
   - ຊຸກຍູ້, ສົ່ງເສີມ ແລະ ກໍ່ສ້າງໂຮງງານປຸງແຕ່ງແຮ່ຄໍາ 1 ໂຮງງານ ແລະ ໂຮງງານປຸງແຕ່ງແຮ່ທາດຟູອໍຣາຍ 2 ໂຮງງານ;
   - ສູ້ຊົນຜະລິດຫີນປູນໃຫ້ໄດ້ 1,21 ລ້ານໂຕນ.

4. ໂຍທາທິການ ແລະ ຂົນສົ່ງ
   - ສູ້ຊົນສ້າງເສັ້ນທາງເຂົ້າເຖິງບ້ານໃຫ້ທຽວໄດ້ 2 ລະດູ ໃຫ້ກວມ 90% ຂອງຈໍານວນບ້ານທັງໝົດ;
   - ສ້າງລະບົບສາງພັກສິນຄ້າ, ລະບົບໂລຊິດສະຕິກຕາມແລວທາງເສດຖະກິດ ຢູ່ດ່ານສາກົນໃຫ້ໄດ້ 4 ແຫ່ງ (ດ່ານສາກົນປາງມອນ, ນໍ້າເງິນ, ນໍ້າເຫືອງ ແລະ ພູດູ່);
   - ຍົກລະດັບເສັ້ນທາງປູຫີນເປັນທາງປູຢາງໃຫ້ເພີ່ມຂຶ້ນ 15% ຕໍ່ປີ ແລະ ຮັບປະກັນໃຫ້ເສັ້ນທາງຫຼວງແຫ່ງຊາດ-ທາງຫຼວງຂອງແຂວງ ໃຫ້ທ່ຽວໄດ້ສະດວກດີ;
   - ສູ້ຊົນສ້າງຈຸດສາກໝໍ້ໄຟລົດໄຟຟ້າ ໃຫ້ໄດ້ 2 ແຫ່ງ ຢູ່ໃນເທດສະບານແຂວງ.

5. ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ
   - ເຜີຍແຜ່ແຜນຈັດສັນນໍາໃຊ້ທີ່ດິນ ແລະ ຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານຂັ້ນແຂວງ ໃຫ້ສໍາເລັດ 100%;
   - ຈັດສັນທີ່ດິນຂັ້ນເມືອງ ໃຫ້ໄດ້ 7 ເມືອງ, ຈັດສັນທີ່ດິນຂັ້ນບ້ານ ໃຫ້ໄດ້ 88 ບ້ານ;
   - ຂຶ້ນທະບຽນອອກໃບຕາດິນ ພ້ອມທັງບັນທຶກຂໍ້ມູນເຂົ້າລະບົບທີ່ທັນສະໄໝ ໃຫ້ໄດ້ 16.386 ຕອນ, ປະເມີນຄືນການຈັດສັນທີ່ດິນ 8 ປະເພດ ຂັ້ນບ້ານໃຫ້ໄດ້ 283 ບ້ານ;

6. ໄປສະນີ ແລະ ການສື່ສານ
   - ພັດທະນາຄວາມຮູ້, ຄວາມສາມາດໃຫ້ພະນັກງານລັດ ດ້ວຍການຝຶກອົບຮົມຄວາມຮູ້ດ້ານ ໄອຊີທີ ແລະ ການນໍາໃຊ້ບໍລິການລະບົບບໍລິຫານລັດດີຈີຕອນ ໃຫ້ໄດ້ 18 ຊຸດ ຂຶ້ນໄປ, ມີຜູ້ເຂົ້າຮ່ວມ 145 ຄົນ ຂຶ້ນໄປ;
   - ສືບຕໍ່ຊຸກຍູ້ ສາຂາບໍລິສັດ ຂະຫຍາຍຕາໜ່າງດ້ານໂທລະຄົມມະນາຄົມ ເຂົ້າຫາເຂດຫ່າງໄກ ແລະ ເຂດທີ່ບໍ່ມີສັນຍານ ຕື່ມ 05 ບ້ານ, ບ້ານສັນຍານອ່ອນ 13 ບ້ານໃຫ້ສໍາເລັດ;

- ຊຸກຍູ້ສົ່ງເສີມໃຫ້ບັນດາພະແນກການ, ອົງການ, ກົມກອງ ແລະ ບັນດາເມືອງ ທີ່ມີເງື່ອນໄຂເປີດນຳໃຊ້ເວັບໄຊຂອງພາກລັດ (G-Web Platform) ໃຫ້ໄດ້ 13 ເວັບໄຊ;

## III. ຄາດໝາຍວັດທະນະທຳ-ສັງຄົມ.

### 1. ຄາດໝາຍຂະແໜງສຶກສາທິການ-ກິລາ

- ອັດຕາເຂົ້າຮຽນຂອງນັກຮຽນ 5 ປີ ໃຫ້ໄດ້ 98%;
- ອັດຕາເຂົ້າຮຽນໃໝ່ລວມ ປ.1 ໃຫ້ບັນລຸ 101%;
- ອັດຕາເຂົ້າໃໝ່ສຸດທິ ປ.1 ບໍ່ໃຫ້ຫຼຸດ 99%;
- ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ (6-10 ປີ) ບໍ່ໃຫ້ລຸດ 99%;
- ອັດຕາເຂົ້າຮຽນໃໝ່ລວມ ປ.5 ໃຫ້ບັນລຸ 101%;
- ອັດຕາປະລະຊັ້ນ ປ 1 ບໍ່ໃຫ້ເກີນ 2%;
- ອັດຕາຈົບຊັ້ນປະຖົມ (ອັດຕາເລື່ອນຊັ້ນ-ຈົບຊັ້ນ) ບໍ່ໃຫ້ຫຼຸດ 96,3%;
- ອັດຕາຄ້າງຫ້ອງຊັ້ນປະຖົມ ບໍ່ໃຫ້ເກີນ 2%;
- ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 (ທຽບໃສ່ນັກຮຽນຕົ້ນປີ ປ.5) ບໍ່ໃຫ້ຫຼຸດ 87,5%;
- ອັດຕາປະລະຊັ້ນປະຖົມ ບໍ່ໃຫ້ເກີນ 1,6%;
- ດັດສະນີຄວາມສະເໝີພາບຍິງ-ຊາຍຂອງອັດຕາເລື່ອນຊັ້ນ ປ.5 ຫາ ມ.1 ຢູ່ໃນລະຫວ່າງ (0,97- 1,03);
- ອັດຕາເຂົ້າຮຽນລວມມັດທະຍົມຕອນຕົ້ນໃຫ້ໄດ້ 83%;
- ອັດຕາເຂົ້າຮຽນລວມມັດທະຍົມຕອນປາຍ ບໍ່ໃຫ້ຫຼຸດ 45%;
- ອັດຕາເຂົ້າຮຽນໃໝ່ລວມ ມ.4 ໃຫ້ບັນລຸ 74%;
- ອັດຕາປະລະມັດທະຍົມຕອນຕົ້ນ ບໍ່ເກີນ 9%;
- ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ 1.033 ຄົນ;
- ຄູຊັ້ນປະຖົມ ແລະ ຊັ້ນມັດທະຍົມສຶກສາ ໄດ້ຮັບການຝຶກອົບຮົມ ໃຫ້ໄດ້ 25%;
- ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໃຫ້ໄດ້ 2%;
- ສົ່ງເສີມໃຫ້ມວນຊົນທຸກເພດ, ທຸກໄວໄດ້ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ກິດຈະກຳການແຂ່ງຂັນກິລາ ບໍ່ໃຫ້ຫຼຸດ 36% ຂອງພົນລະເມືອງ.

### 2. ສາທາລະນະສຸກ

- ສູ້ຊົນເຮັດໃຫ້ອັດຕາເດັກນ້ອຍລຸ່ມ 5 ປີທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ ບໍ່ໃຫ້ເກີນ 8,5% ຂອງຈຳນວນເດັກທີ່ມາຕິດຕາມທັງໝົດ;
- ສູ້ຊົນເຮັດໃຫ້ອັດຕາເດັກນ້ອຍລຸ່ມ 5 ປີທີ່ມີລວງສູງບໍ່ໄດ້ມາດຕະຖານ ບໍ່ໃຫ້ເກີນ 8,7% ຂອງຈຳນວນເດັກທີ່ມາຕິດຕາມທັງໝົດ;
- ສູ້ຊົນເຮັດໃຫ້ອັດຕາການຕາຍຂອງເດັກລຸ່ມ 1 ປີ ບໍ່ໃຫ້ເກີນ 7/1.000 ຂອງເດັກເກີດມີຊີວິດ;
- ສູ້ຊົນເຮັດໃຫ້ອັດຕາການຕາຍຂອງເດັກລຸ່ມ 5 ປີ ບໍ່ໃຫ້ເກີນ 8,8/1.000 ຂອງເດັກເກີດມີຊີວິດ;
- ສູ້ຊົນເຮັດໃຫ້ອັດຕາສ່ວນການຕາຍຂອງແມ່ ບໍ່ໃຫ້ເກີນ 79/100.000 ຂອງເດັກເກີດມີຊີວິດ;

- ສູ້ຊົນເຮັດໃຫ້ອັດຕາການເກີດລູກມີແພດຊ່ວຍ ໃຫ້ໄດ້ 85% ຂອງແມ່ມານເປົ້າໝາຍ;
- ສູ້ຊົນເຮັດໃຫ້ອັດຕາການສັກຢາວັກຊີນກັນພະຍາດໃນເດັກກຸ່ມ 1 ປີ ໃຫ້ໄດ້ 95,6% ຂອງເດັກເປົ້າໝາຍ;
- ສູ້ຊົນເຮັດໃຫ້ອັດຕາການຊົມໃຊ້ນ້ຳສະອາດ ໃຫ້ໄດ້ 97% ຂອງຈຳນວນປະຊາກອນ;
- ສູ້ຊົນເຮັດໃຫ້ອັດຕາການຊົມໃຊ້ວິດຖ່າຍ ໃຫ້ໄດ້ 100% ຂອງຈຳນວນຄອບຄົວທັງໝົດ;
- ສູ້ຊົນເຮັດໃຫ້ອັດຕາການປົກຄຸມປະກັນສຸຂະພາບ ໃຫ້ໄດ້ 100% ຂອງຈຳນວນປະຊາກອນ;
- ສູ້ຊົນເຮັດໃຫ້ອັດຕາການຮັບຮອງ ແລະ ປະກາດບ້ານສາທາລະນະສຸກແບບຢ່າງໃຫ້ໄດ້ 94% ຂອງຈຳນວນບ້ານທັງໝົດ.

3. ແຮງງານ ແລະ ສະຫວັດດີການ-ສັງຄົມ
- ສູ້ຊົນເຮັດໃຫ້ກຳລັງແຮງງານ ໄດ້ຮັບການຝຶກອົບຮົມ ແລະ ພັດທະນາສີມືແຮງງານ ໃຫ້ໄດ້ 13.201 ຄົນ;
- ຈັດຫາງານ ໃຫ້ແກ່ກຳລັງແຮງງານພາຍໃນ ເຂົ້າເຮັດວຽກໃຫ້ໄດ້ 16.629 ຄົນ;
- ສູ້ຊົນຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ໄດ້ 2.772 ຄົນ;
- ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິ ປະໄຕ ຕາມດຳລັດ 272/ລບ ໃຫ້ໄດ້ ຈຳນວນ 1.068 ທ່ານ;
- ປຸກລະດົມເງິນເຂົ້າໃນກອງທຶນແຮຊ່ວຍເຫຼືອສຸກເສີນຜູ້ປະສົບໄພພິບັດ ໃຫ້ໄດ້ 800 ລ້ານກີບຕໍ່ປີ;

4. ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
- ເຄື່ອນໄຫວເກັບກຳຂ່າວ ແລະ ຜະລິດຂ່າວ ໃຫ້ໄດ້ 9.000 ຂ່າວ;
- ສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 2.116 ຄອບຄົວ;
- ສ້າງບ້ານວັດທະນະທຳໃໝ່ ໃຫ້ໄດ້ 14 ບ້ານ;
- ສ້າງກົມກອງວັດທະນະທຳ ໃຫ້ໄດ້ 101 ກົມກອງ;
- ດຶງດູດນັກທ່ອງທ່ຽວໃຫ້ໄດ້ 175.000 ຄົນ/ຕໍ່ປີ, ສ້າງລາຍຮັບໃຫ້ໄດ້ 7 ລ້ານໂດລາສະຫະລັດຂຶ້ນໄປ.

5. ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.
- ສູ້ຊົນລຶບລ້າງຄອບຄົວທຸກຍາກ ໃຫ້ໄດ້ 15.459 ຄອບຄົວ, ເຮັດໃຫ້ຄອບຄົວທຸກຍາກຍັງເຫຼືອ ບໍ່ເກີນ 20.045 ຄອບຄົວ ເທົ່າກັບ 25% ຂອງຄອບຄົວທັງໝົດ;
- ສູ້ຊົນລຶບລ້າງບ້ານທຸກຍາກ ໃຫ້ໄດ້ 30 ບ້ານ ເຮັດໃຫ້ບ້ານທຸກຍາກ ຍັງເຫຼືອ 85 ບ້ານ;
- ສູ້ຊົນສ້າງເມືອງບັນລຸມາດຕະຖານພົ້ນທຸກ ໃຫ້ໄດ້ 2 ເມືອງ ຄື: ເມືອງໄຊຍະບູລີ ແລະ ເມືອງຊຽງຮ່ອນ;
- ສູ້ຊົນສ້າງບ້ານພັດທະນາ ໃຫ້ໄດ້ເພີ່ມຕື່ມ 10 ບ້ານ;
- ສູ້ຊົນສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດໃຫ້ໄດ້ 2 ຈຸດ (ບ້ານບົວບານ, ບ້ານທອງ).

ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ

ເຫັນດີຮັບຮອງເອົາ 6 ມາດຕະການຈັດຕັ້ງປະຕິບັດ, 4 ກົນໄກການຈັດຕັ້ງປະຕິບັດ ຕາມການສະເໜີຂອງອົງການປົກຄອງແຂວງ, ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດ ບັນດາຄາດໝາຍຂອງແຜນພັດທະນາ

ເສດຖະກິດ-ສັງຄົມຂອງແຂວງ ໄລຍະທ້າຍສະໄໝ ຮອດປີ 2025 ໃຫ້ບັນລຸໄດ້ຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້. ກອງປະຊຸມ ສະເໜີໃຫ້ອົງການປົກຄອງແຂວງເອົາໃຈໃສ່ປະຕິບັດບາງມາດຕະການເພີ່ມເຕີມ ດັ່ງນີ້:

1. ສືບຕໍ່ ສ້າງການຫັນປ່ຽນຢ່າງແຂງແຮງໃນການສູ້ຊົນ ຈັດຕັ້ງປະຕິບັດ ມະຕິກອງປະຊຸມສະພາປະຊາຊົນແຂວງ ສະບັບເລກທີ 11/ສພຂ.ຊຍ ໃຫ້ບັນລຸຕາມແຜນການ;
2. ໃຫ້ບັນດາຂະແໜງການຕ່າງໆ ສືບຕໍ່ຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 5 ປີ ຄັ້ງທີ VII (2021-2025) ຂອງແຂວງ ໂດຍຫັນເປັນແຜນການ, ໂຄງການ ແລະ ແຜນງານລະອຽດຂອງຂະແໜງການ ໃຫ້ເປັນລະບົບຕໍ່ເນື່ອງ ໃນແຕ່ລະປີ;
3. ຮັບປະກັນການຈັດເກັບລາຍຮັບເຂົ້າງົບປະມານໃຫ້ຄົບຖ້ວນ, ຂຸດຄົ້ນທຸກແຫຼ່ງລາຍຮັບເພີ່ມ, ເອົາໃຈໃສ່ການປະຕິບັດມາດຕະການປະຢັດ ແລະ ຕ້ານການຟຸມເຟືອຍງົບປະມານ ເພື່ອຫຼຸດຜ່ອນໜີ້ສິນການລົງທຶນ, ຄຸ້ມຄອງລາຍຈ່າຍ ໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະກິດ;
4. ເອົາໃຈໃສ່ເຂັ້ມງວດການຄຸ້ມຄອງ, ຕິດຕາມ-ກວດກາ ການເໜັງຕີງຂອງລາຄາສິນຄ້າ ຢ່າງເປັນລະບົບ ໂດຍສະເພາະລາຍການສິນຄ້າ ແລະ ການບໍລິການ, ພ້ອມທັງກວດຄຸນນະພາບ ແລະ ມາດຕະຖານຂອງສິນຄ້າທີ່ນໍາເຂົ້າ ເພື່ອບໍ່ໃຫ້ສົ່ງຜົນກະທົບຕໍ່ສຸຂະພາບຂອງຜູ້ບໍລິໂພກ;
5. ເພີ່ມທະວີໃນການຕິດຕາມ, ກວດກາ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທໍາມະຊາດ ຈາກການພັດທະນາໂຄງການຕ່າງໆ ເປັນຕົ້ນ: ໂຄງການຂຸດຄົ້ນບໍ່ແຮ່, ໂຄງການພັດທະນາໄຟຟ້າ, ໂຄງການກໍ່ສ້າງພື້ນຖານໂຄງລ່າງ ໃຫ້ສອດຄ່ອງຕາມລະບຽບ ແລະ ກົດໝາຍ;
6. ຊຸກຍູ້ ແລະ ສົ່ງເສີມ ວຽກງານພັດທະນາສີມືແຮງງານ ຕອບສະໜອງຄວາມຕ້ອງການຂອງຕະຫຼາດສີມືແຮງງານ ແລະ ຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ, ສ້າງວຽກເຮັດງານທໍາໃຫ້ແຮງງານພາຍໃນແຂວງ, ສ້າງເງື່ອນໄຂໃຫ້ແກ່ແຮງງານເຂົ້າເຖິງສະຫວັດດີການປະກັນສັງຄົມ ທີ່ມີປະສິດທິພາບ;
7. ພັດທະນາຜະລິດຕະພັນດ້ານວັດທະນະທໍາ ໃຫ້ເປັນເສດຖະກິດ, ມີຄວາມຫຼາກຫຼາຍ ທັງປະລິມານ ແລະ ຄຸນນະພາບ, ເພີ່ມທະວີການຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດການສ້າງຄອບຄົວ ແລະ ບ້ານວັດທະນະທໍາ ໃຫ້ຕໍ່ເນື່ອງ ແລະ ຮັບປະກັນໃຫ້ມີຄວາມຍືນຍົງ, ປັບປຸງໂຄງລ່າງພື້ນຖານດ້ານການທ່ອງທ່ຽວ ໃຫ້ໄດ້ຕາມມາດຕະຖານ ແລະ ສ້າງວົງຈອນການທ່ອງທ່ຽວໃຫ້ເປັນຜະລິດຕະພັນໃໝ່.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ອົງການປົກຄອງແຂວງ ຊີ້ນໍາບັນດາພະແນກການ, ອົງການລັດທຽບເທົ່າພະແນກ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ຄະນະປະຈໍາສະພາປະຊາຊົນແຂວງ, ບັນດາຄະນະກໍາມະການ, ສະມາຊິກສະພາປະຊາຊົນແຂວງ ດໍາເນີນການຕິດຕາມ ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນີລັນ ຄໍາພັນເພັງ